ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: ๓๘๘๐ /ອຄ
ນະຄອນຫຼວງວຽງຈັນ, ວັນທີ: ๑๔ ๐๙ ๒๐๒๕

ຂໍ້ຕົກລົງ
ວ່າດ້ວຍ ການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ

- ອີງຕາມ ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ, ສະບັບເລກທີ 20/ສພຊ, ລົງວັນທີ 07 ກໍລະກົດ 2022.
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025.
- ອີງຕາມ ມາດຕະຖານເຕັກນິກໄຟຟ້າຂອງລາວ ສະບັບເລກທີ 1230/ພບ, ລົງວັນທີ 27 ມີຖຸນາ 2019.
- ອີງຕາມ ໜັງສືສະເໜີ ຂອງກົມພະລັງງານ ສະບັບເລກທີ 2164/ກພງ, ລົງວັນທີ 09 ຕຸລາ 2026.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຄວາມສ່ຽງ, ການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ ໃຫ້ຖືກຕ້ອງສອດຄ່ອງຕາມມາດຕະຖານການອອກແບບ, ການກໍ່ສ້າງ, ການດຳເນີນງານ, ການບໍລິຫານຈັດການນ້ຳ ແລະ ແຜນຮັບມືສຸກເສີນຂອງເຂື່ອນ ເພື່ອຮັບປະກັນຄວາມປອດໄພຂອງເຂື່ອນ ແລະ ຫຼຸດຜ່ອນຜົນກະທົບຕໍ່ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ-ສັງຄົມ, ແນ່ໃສ່ປະກອບສ່ວນເຂົ້າໃນການພັດທະນາພະລັງງານໄຟຟ້າ ຕາມທິດສີຂຽວ ແລະ ຍືນຍົງ.

ມາດຕາ 2 ການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ

ການຈັດປະເພດຄວາມສ່ຽງຂອງເຂື່ອນ ແມ່ນເພື່ອກຳນົດມາດຕະການ, ມາດຕະຖານ ໃນການອອກແບບ, ກໍ່ສ້າງ ແລະ ດຳເນີນງານຂອງເຂື່ອນ ເພື່ອຮັບປະກັນຄວາມປອດໄພ, ການຄຸ້ມຄອງ, ແບບແຜນການກວດກາ ແລະ ວາງແຜນຮັບມືກໍລະນີສຸກເສີນ.

ການຈົດທະບຽນຄວາມສ່ຽງຂອງເຂື່ອນ ແມ່ນການຂຶ້ນບັນຊີ ຫຼື ເກັບກຳຂໍ້ມູນປະເພດຄວາມສ່ຽງຂອງເຂື່ອນ.

ມາດຕາ 3 ການອະທິບາຍສັບ

1. ເຂື່ອນ ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງດ້ວຍ ເຍຕົ້ງ, ຫີນ, ດິນ ແລະ/ຫຼື ວັດສະດຸອື່ນ ເພື່ອກັ້ນ, ກັກເກັບ, ລະບາຍນ້ຳ ຫຼື ອ່ວຍນ້ຳ.
2. ເຂື່ອນຂອງຂະແໜງພະລັງງານໄຟຟ້າ ປະກອບດ້ວຍ ເຂື່ອນທີ່ກັ້ນ ແລະ ກັກເກັບນ້ຳ ເພື່ອສະໜອງນ້ຳ ໃຫ້ແກ່ການຜະລິດໄຟຟ້າ ລວມມີ ເຂື່ອນໄຟຟ້ານ້ຳຕົກ, ເຂື່ອນສະໜອງນ້ຳໃຫ້ໂຮງໄຟຟ້າຄວາມຮ້ອນ ທຸກປະເພດ.
3. ຜູ້ພັດທະນາເຂື່ອນ ໝາຍເຖິງ ເຈົ້າຂອງເຂື່ອນ, ຜູ້ພັດທະນາໂຄງການ, ຜູ້ພັດທະນາ, ບໍລິສັດໂຄງການ ແລະ ເຈົ້າຂອງໂຄງການ.
4. ອົງການຄຸ້ມຄອງຄວາມປອດໄພເຂື່ອນ ໝາຍເຖິງ ກະຊວງອຸດສາຫະກຳ ແລະ ການຄ້າ (ກະຊວງ ອຄ), ພະແນກ ອຄ ຂັ້ນແຂວງ ແລະ ນະຄອນຫຼວງ ທີ່ຮັບຜິດຊອບ ຄຸ້ມຄອງວຽກງານຄວາມປອດໄພເຂື່ອນ ຕາມປະເພດຄວາມສ່ຽງຂອງເຂື່ອນ ໂດຍສອດຄ່ອງກັບມາດຕາ 12 ຂອງກົດໝາຍວ່າດ້ວຍຄວາມ ປອດໄພຂອງເຂື່ອນ.

ມາດຕາ 4 ຫຼັກການກ່ຽວກັບການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ

ການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ວາງອອກໃນແຕ່ລະໄລຍະ.
2. ຮັບປະກັນຄວາມຖືກຕ້ອງຕາມມາດຕະຖານເຕັກນິກໄຟຟ້າຂອງລາວ.
3. ປະຕິບັດຕາມຄຳແນະນຳວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ກອບໜ້າວຽກໃນການສ້າງແຜນຮັບ ມືສຸກເສີນຂອງເຂື່ອນໄຟຟ້າ.
4. ຮັບປະກັນຄວາມປອດໄພຂອງເຂື່ອນ ແລະ ຫຼຸດຜ່ອນຜົນກະທົບທີ່ເກີດຈາກເຂື່ອນ.

ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນ ໄຫວ ແລະ ພົວພັນ ກັບການພັດທະນາເຂື່ອນຂອງຂະແໜງພະລັງງານໄຟຟ້າ ຢູ່ ສປປ ລາວ.

ໝວດທີ 2
ການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ

ຜູ້ພັດທະນາເຂື່ອນຕ້ອງດຳເນີນການປະເມີນຄວາມສ່ຽງຂອງເຂື່ອນຂອງຕົນ ແລ້ວຍື່ນສະເໜີຫາ ອົງການຄຸ້ມຄອງຄວາມປອດໄພເຂື່ອນ ເພື່ອພິຈາລະນາຈົດທະບຽນຄວາມສ່ຽງຂອງເຂື່ອນ.

ສຳລັບເຂື່ອນທີ່ນອນໃນແຜນການກໍ່ສ້າງໃໝ່, ຜູ້ພັດທະນາເຂື່ອນດຳເນີນການປະເມີນຄວາມສ່ຽງຂອງ ເຂື່ອນຄັ້ງທຳອິດ ໃນເວລາດຳເນີນການອອກແບບພື້ນຖານ, ໂດຍອີງຕາມມາດຕະຖານເຕັກນິກໄຟຟ້າຂອງ ລາວ ມາດຕາ 17 ແລະ ກອບໜ້າວຽກຂອງການອອກແບບພື້ນຖານ (TOR of Basic Design 2018) ແລ້ວຍື່ນສະເໜີຫາອົງການຄຸ້ມຄອງຄວາມປອດໄພເຂື່ອນ ພາຍໃນເວລາ 60 ວັນ ຫຼັງຈາກໄດ້ຮັບຮອງການ ອອກແບບພື້ນຖານ.

ສຳລັບເຂື່ອນທີ່ດຳເນີນການຜະລິດໄຟຟ້າມາແລ້ວ, ຜູ້ພັດທະນາເຂື່ອນ ຕ້ອງສືບຕໍ່ດຳເນີນການຕິດຕາມ ກວດກາຄວາມປອດໄພຂອງເຂື່ອນຕົນຢ່າງເປັນປົກກະຕິ ແລະ ດຳເນີນການກວດສອບກວດກາ ຄວາມ ປອດໄພຂອງເຂື່ອນ ແບບລະອຽດ ແລະ ຄົບຖ້ວນ. ໃນນັ້ນ, ໃຫ້ປະເມີນຄືນຄວາມປອດໄພຂອງເຂື່ອນທີ່ ຜ່ານການໃຊ້ງານມາແລ້ວນັ້ນ, ປະເມີນຄືນແຜນຮັບມືສຸກເສີນ, ແຜນທີ່ນ້ຳຖ້ວມຢູ່ດ້ານລຸ່ມເຂື່ອນ ແລະ ຜົນ ກະທົບຕ່າງໆ ທີ່ອາດຈະເກີດຂຶ້ນ; ດຳເນີນການຈັດປະເພດຄວາມສ່ຽງ ແລະ ສະເໜີຫາອົງການຄຸ້ມຄອງ ຄວາມປອດໄພຂອງເຂື່ອນ ຄົ້ນຄວ້າ-ທົບທວນ ເພື່ອພິຈາລະນາ ອອກໜັງສືຮັບຮູ້ ການຈັດປະເພດຄວາມ ສ່ຽງຂອງເຂື່ອນຄືນໃໝ່ ເປັນແຕ່ລະໄລຍະ.

ກ. ວິທີການຈັດປະເພດຄວາມສ່ຽງຂອງເຂື່ອນ

ມາດຕາ 6 ວິທີການຈັດປະເພດຄວາມສ່ຽງຂອງເຂື່ອນ

ແມ່ນການພິຈາລະນາຜົນຂອກ ປັດໄຈຄວາມສ່ຽງສູງສຸດຂອງບັນດາປັດໄຈ ດ້ານ: ບໍລິມາດອ່າງກັກເກັບນ້ຳ, ຄວາມສູງຂອງເຂື່ອນ, ປະຊາກອນທີ່ມີຄວາມສ່ຽງ ແລະ ຄວາມເສຍຫາຍ ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເກີດຂຶ້ນຢູ່ດ້ານລຸ່ມເຂື່ອນ.

ມາດຕາ 7 ບໍລິມາດອ່າງກັກເກັບນ້ຳ

ແມ່ນຄວາມສາມາດກັກເກັບນ້ຳຂອງເຂື່ອນສະເພາະໃດໜຶ່ງ, ແມ່ນບໍລິມາດຂອງນ້ຳ ແລະ/ຫຼື ຂອງຕະກອນທີ່ເຂື່ອນສາມາດກັກເກັບໄວ້ໄດ້ ໂດຍບໍ່ໃຫ້ລົ້ນສັນເຂື່ອນ.

ລະດັບນ້ຳ ເພື່ອຄິດໄລ່ບໍລິມາດນ້ຳໃນອ່າງ ແມ່ນ ລະດັບນ້ຳຕ່ຳສຸດຈາກຕີນເຂື່ອນ ຫາ ລະດັບນ້ຳຢູ່ຈຸດສູງສຸດຂອງປະຕູລະບາຍນ້ຳນອງ (spillway gate) ຫຼື ໃນກໍລະນີໂຄງສ້າງທາງລະບາຍນ້ຳນອງ ເປັນປະເພດບໍ່ມີປະຕູ (ungated spillway) ແມ່ນຮອດລະດັບສັນຂອງຝາຍ ຂອງໂຄງສ້າງລະບາຍນ້ຳນອງດັ່ງກ່າວ (weir crest or spillway crest).

ມາດຕາ 8 ຄວາມສູງຂອງເຂື່ອນ

ຄວາມສູງຂອງເຂື່ອນແມ່ນຄວາມແຕກຕ່າງ ລະຫວ່າງ ສ່ວນທີ່ຕ່ຳທີ່ສຸດຂອງເຂື່ອນ ຫາ ສັນເຂື່ອນ (ໂດຍທຽບໃສ່ລະດັບໜ້ານ້ຳທະເລ) ແລະ ກໍລະນີເຂື່ອນມີກຳແພງກັນຄື້ນນ້ຳ (Parapet Wall) ແມ່ນຈະຖືເອົາສ່ວນເທິງສຸດຂອງຝາກັນຄື້ນນ້ຳດັ່ງກ່າວ.

ມາດຕາ 9 ປະຊາກອນທີ່ມີຄວາມສ່ຽງ

ປະຊາກອນທີ່ມີຄວາມສ່ຽງ ແມ່ນປະຊາກອນຖາວອນ ທີ່ກຳລັງອາໄສຢູ່ ຫຼື ເຮັດວຽກຢູ່ໃນພື້ນທີ່ລຸ່ມເຂື່ອນທັງໝົດ ທີ່ອາດຈະຖືກກະທົບໃນກໍລະນີເຂື່ອນແຕກພັງ ເຊິ່ງຈະເປັນຜູ້ທີ່ຈະປະເຊີນກັບນ້ຳຖ້ວມໂດຍກົງ ໃນກໍລະນີທີ່ບໍ່ສາມາດ ດຳເນີນການຊ່ວຍເຫຼືອໃດໆ ຫຼື ບໍ່ສາມາດໄດ້ອົບພະຍົບເຂົ້າເຈົ້າໄດ້.

ບຸກຄົນທີ່ພັກຢູ່ໃນໂຮງແຮມ, ສະຖານທີ່ທ່ອງທ່ຽວ, ການດຳເນີນກິດຈະການທຸລະກິດຕາມສາຍນ້ຳ ແລະ ກິດຈະກຳອື່ນໆ ທີ່ມີການເຕົ້າໂຮມຄົນ ໃນໄລຍະເວລາທີ່ຍາວນານ ກໍ່ຕ້ອງໄດ້ຖືກນັບເຂົ້າ ໃນກຸ່ມປະຊາກອນທີ່ມີຄວາມສ່ຽງ.

ມາດຕາ 10 ຄວາມເສຍຫາຍ ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເກີດຂຶ້ນຢູ່ດ້ານລຸ່ມເຂື່ອນ

ການຈັດລະດັບຄວາມເສຍຫາຍທີ່ອາດເກີດຂຶ້ນຢູ່ດ້ານລຸ່ມເຂື່ອນ ໃນຕາຕະລາງ ຕາມມາດຕາ 11 ແມ່ນອີງໃສ່ຈຳນວນພື້ນຖານໂຄງລ່າງ ທີ່ຈະຖືກຜົນກະທົບ ໃນກໍລະນີເຫດເຂື່ອນແຕກພັງ.

ພື້ນຖານໂຄງລ່າງ ທີ່ຈະນຳມາພິຈາລະນາປະກອບມີ: ອາຄານທີ່ຢູ່ອາໄສ, ຫ້ອງການ, ສິ່ງອຳນວຍຄວາມສະດວກທາງຜ່ານອຸດສາຫະກຳ ແລະ ອາຄານສາທາລະນະຕ່າງໆ. ການກຳນົດລະດັບຄວາມເສຍຫາຍ ມີດັ່ງລຸ່ມນີ້:

- ບໍ່ມີຄວາມເສຍຫາຍ : ສຳລັບບ່ອນທີ່ບໍ່ມີພື້ນຖານໂຄງລ່າງ.
- ຄວາມເສຍຫາຍຕ່ຳ : ສຳລັບບ່ອນທີ່ມີ ພື້ນຖານໂຄງລ່າງ 1 ຫາ 2 ຫຼັງ.
- ຄວາມເສຍປານກາງ : ສຳລັບບ່ອນທີ່ມີ ພື້ນຖານໂຄງລ່າງ 3 ຫາ 20 ຫຼັງ.
- ຄວາມເສຍຫາຍສູງ : ສຳລັບບ່ອນທີ່ມີ ພື້ນຖານໂຄງລ່າງ ຫຼາຍກວ່າ 20 ຫຼັງຂຶ້ນໄປ.

ມາດຕາ 11 ການຄິດໄລ່ປະເມີນຄວາມສ່ຽງຂອງເຂື່ອນ

ການຄິດໄລ່ປະເມີນຄວາມສ່ຽງຂອງເຂື່ອນ ແມ່ນອີງຕາມຕາຕະລາງຂ້າງລຸ່ມນີ້:

ປັດໄຈຄວາມສ່ຽງ	ຄະແນນຄວາມສ່ຽງ			
ບໍລິມາດອ່າງກັກເກັບນ້ຳ (ລ້ານແມັດກ້ອນ)	<0.1	0.1 - 3	3 - 100	>100
ຄະແນນ	0	4	6	8
ຄວາມສູງຂອງເຂື່ອນ (ແມັດ)	<15	15 - 30	30 - 45	>45
ຄະແນນ	0	2	4	6
ຈຳນວນປະຊາກອນທີ່ມີຄວາມສ່ຽງ (ຄົນ)	ບໍ່ມີ	1 - 10	10 - 100	>100
ຄະແນນ	0	4	8	12
ຄວາມເສຍຫາຍ ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເກີດຂຶ້ນຢູ່ດ້ານລຸ່ມເຂື່ອນ	ບໍ່ມີ	ຕ່ຳ	ປານກາງ	ສູງ
ຄະແນນ	0	4	8	12

ມາດຕາ 12 ຜົນການປະເມີນຄວາມສ່ຽງຂອງເຂື່ອນ

ຜົນການປະເມີນຄວາມສ່ຽງຂອງເຂື່ອນ ແມ່ນການລວມຄະແນນຂອງປັດໄຈຄວາມສ່ຽງສູງສຸດຂອງ ບັນດາປັດໄຈ = ຄະແນນຄວາມສ່ຽງ ຂອງ ບໍລິມາດອ່າງກັກເກັບນ້ຳ + ຄະແນນຄວາມສ່ຽງ ຂອງ ຄວາມ ສູງຂອງເຂື່ອນ + ຄະແນນຄວາມສ່ຽງ ຂອງ ຈຳນວນປະຊາກອນທີ່ມີຄວາມສ່ຽງ + ຄະແນນຄວາມສ່ຽງ ຂອງ ຄວາມເສຍຫາຍ ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເກີດຂຶ້ນຢູ່ດ້ານລຸ່ມເຂື່ອນ.

- ຄະແນນລວມ ລະຫວ່າງ 0 ຫາ 6 ຈັດເປັນ ປະເພດເຂື່ອນທີ່ມີຄວາມສ່ຽງຕ່ຳ.
- ຄະແນນລວມ ລະຫວ່າງ 7 ຫາ 18 ຈັດເປັນ ປະເພດເຂື່ອນທີ່ມີຄວາມສ່ຽງປານກາງ.
- ຄະແນນລວມ ລະຫວ່າງ 19 ຫາ 30 ຈັດເປັນ ປະເພດເຂື່ອນທີ່ມີຄວາມສ່ຽງສູງ.
- ຄະແນນລວມ ລະຫວ່າງ 31 ຫາ 38 ຈັດເປັນ ປະເພດເຂື່ອນທີ່ມີຄວາມສ່ຽງຮ້າຍແຮງ.

ການພັດທະນາໂຄງການພະລັງງານໄຟຟ້າ, ໂຄງການໜຶ່ງ ອາດປະກອບມີເຂື່ອນດຽວ ຫຼື ຫຼາຍເຂື່ອນ ເປັນຕົ້ນ: ເຂື່ອນຫຼັກ, ເຂື່ອນຊ່ວຍ, ເຂື່ອນທຳມະຊາດ (ບັນດາສັນພູຂອງຂອບອ່າງກັກເກັບນ້ຳ), ເຂື່ອນ ຕັນນ້ຳສຳລັບການກໍ່ສ້າງ ແມ່ນຕ້ອງໄດ້ປະເມີນ ແລະ ຈັດປະເພດຄວາມສ່ຽງ ຂອງເຂື່ອນທັງໝົດ. ໃນ ກໍລະນີມີອ່າງເກັບນ້ຳໜຶ່ງ ຫາກມີຫຼາຍເຂື່ອນ ແມ່ນໃຫ້ເອົາຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງສູງສຸດ ເປັນໂຕກຳນົດຄວາມສ່ຽງລວມຂອງເຂື່ອນຂອງໂຄງການພະລັງງານໄຟຟ້າດັ່ງກ່າວ, ບໍ່ແມ່ນຄວາມສ່ຽງໂດຍ ສະເລ່ຍຈາກຫຼາຍເຂື່ອນ.

ມາດຕາ 13 ເຂື່ອນຕັ້ງຢູ່ໃນສາຍນ້ຳດຽວກັນ

ການຈັດປະເພດຄວາມສ່ຽງຂອງເຂື່ອນຕ້ອງປະຕິບັດສຳລັບທຸກໆເຂື່ອນທີ່ຕັ້ງຢູ່ໃນສາຍນ້ຳດຽວກັນ. ຜູ້ ພັດທະນາເຂື່ອນທີ່ສ້າງເຂື່ອນໃນສາຍນ້ຳດຽວກັນ ຕ້ອງຮັບຜິດຊອບການຈັດປະເພດຄວາມສ່ຽງຂອງເຂື່ອນ ຕົນເອງ ໂດຍການຄຳນຶງເຖິງ ບັນດາເຂື່ອນທີ່ຢູ່ຕອນລຸ່ມຂອງສາຍນ້ຳດຽວກັນນັ້ນ ທີ່ອາດຈະແຕກຕາມລຳ ດັບ ດັ່ງລຸ່ມນີ້:

ການຈັດປະເພດຄວາມສ່ຽງຄັ້ງທຳອິດໃນເວລາດຳເນີນການອອກແບບພື້ນຖານ ແລະ ໃນກໍລະນີທີ່ ມີຄື້ນນ້ຳຈາກເຂື່ອນຢູ່ເທິງແຕກລົງໄປຮອດເຂື່ອນຖົມ (Fill Dam) ຢູ່ເບື້ອງລຸ່ມ ແມ່ນຈຳເປັນຕ້ອງໄດ້ ສົມມຸດວ່າເຂື່ອນທີ່ຕັ້ງຢູ່ລຸ່ມໃນທີ່ສຸດຈະແຕກເຊັ່ນກັນ. ຖ້າເກີດຄື້ນນ້ຳຈາກເຂື່ອນທາງເທິງແຕກໄປຮອດ

ເຂື່ອນຕ່າງໆຢູ່ເບື້ອງລຸ່ມ ທີ່ບໍ່ແມ່ນປະເພດເຂື່ອນຖົມ ອາດສົມມຸດໄດ້ວ່າເຂື່ອນຢູ່ລຸ່ມຈະແຕກ ກໍ່ຕໍ່ເມື່ອ ລະດັບນ້ຳຂຶ້ນສູງກວ່າສັນເຂື່ອນ ສ່ວນທີ່ບໍ່ໃຫ້ນ້ຳໄຫຼຜ່ານ. ການກຳນົດລະດັບນ້ຳຂອງອ່າງ (ເຂື່ອນ) ທີ່ຢູ່ເບື້ອງລຸ່ມ ແມ່ນໃຫ້ສົມມຸດເອົາລະດັບນ້ຳເຕັມອ່າງ ສຳລັບກໍລະນີສະພາບອາກາດປົກກະຕິ ແລະ ໃນກໍລະນີນ້ຳນອງ ແມ່ນກຳນົດເອົາລະດັບນ້ຳນອງຂອງເຂື່ອນດັ່ງກ່າວ ເພື່ອເຮັດການວິເຄາະການແຕກຝັ່ງຂອງເຂື່ອນໃນສາຍນ້ຳດຽວກັນ.

ການປະເມີນຫັດໄຈຄວາມສ່ຽງ ເພື່ອປັບປຸງການຈັດປະເພດຄວາມສ່ຽງນັ້ນ ຜົນກະທົບແບບສະສົມຂອງເຂື່ອນໃນສາຍນ້ຳດຽວກັນ ຕ້ອງໄດ້ຮັບການພິຈາລະນາ ຕາມທີ່ລະບຸໄວ້ໃນບົດແນະນຳຄວາມປອດໄພຂອງເຂື່ອນ ວ່າດ້ວຍແຜນຮັບມືສຸກເສີນ 2018 ແລະ ກອບໜ້າວຽກສຳລັບແຜນຮັບມືສຸກເສີນ 2023.

ຂ. ການຈົດທະບຽນຄວາມສ່ຽງຂອງເຂື່ອນ

ມາດຕາ 14 ການຍື່ນຈົດທະບຽນຄວາມສ່ຽງຂອງເຂື່ອນ

ຜູ້ພັດທະນາເຂື່ອນຍື່ນສະເໜີການຈັດປະເພດຄວາມສ່ຽງຂອງເຂື່ອນ ຫາອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ພ້ອມເອກະສານສະໜັບສະໜູນ ແລະ ການວິເຄາະຕ່າງໆ.

ມາດຕາ 15 ການປະກອບເອກະສານ

ເອກະສານເພື່ອສະເໜີການຈັດປະເພດຄວາມສ່ຽງຂອງເຂື່ອນ ປະກອບມີ:

1. ໜັງສືສະເໜີ.
2. ແບບຟອມການຄົດໄລ່ປະເມີນຄວາມສ່ຽງຂອງເຂື່ອນ.
3. ເອກະສານສະໜັບສະໜູນ ແລະ ການວິເຄາະ ຕາມທີ່ລະບຸໄວ້ໃນແບບຟອມ.

ຜູ້ພັດທະນາເຂື່ອນປະກອບເອກະສານໃຫ້ຄົບຖ້ວນ ແລ້ວຍື່ນສະເໜີການຈັດປະເພດຄວາມສ່ຽງຂອງເຂື່ອນ ຫາອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ມາດຕາ 16 ການພິຈາລະນາ

ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຈະພິຈາລະນາ ຈົດທະບຽນຄວາມສ່ຽງຂອງເຂື່ອນ ໂດຍການກວດສອບ ແລະ ກວດກາ ຄວາມຖືກຕ້ອງຂອງຂັ້ນຕອນການຄົດໄລ່, ການປະເມີນ, ອົງປະກອບທີ່ນຳມາຄົດໄລ່ໃນການຈັດປະເພດຄວາມສ່ຽງຂອງເຂື່ອນ ແລະ ຄວາມໜ້າເຊື່ອຖືຂອງຜົນໄດ້ຮັບ ແລະ/ຫຼື ລົງປະເມີນພາກສະໜາມຕົວຈິງ ພາຍໃນເວລາ 30 ວັນ ເພື່ອອອກໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນ ຫຼື ປະຕິເສດ ເພື່ອໃຫ້ຜູ້ພັດທະນາເຂື່ອນນຳໄປປັບປຸງ.

ມາດຕາ 17 ໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ

ພາຍຫຼັງພິຈາລະນາວ່າການຈັດປະເພດຄວາມສ່ຽງທີ່ໄດ້ສະເໜີມາ ຖືກຕ້ອງຕາມຫຼັກວິຊາການ, ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນຈົດທະບຽນປະເພດຄວາມສ່ຽງຂອງເຂື່ອນ ແລະ ອອກໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ ໃຫ້ແກ່ຜູ້ພັດທະນາເຂື່ອນ.

ໃບຢັ້ງຢືນການຈັດປະເພດປະເພດຄວາມສ່ຽງຂອງເຂື່ອນ ຈະລະບຸປະເພດຄວາມສ່ຽງຂອງເຂື່ອນ ພ້ອມກັບຄະແນນຄວາມສ່ຽງຂອງແຕ່ລະຫັດໄຈຄວາມສ່ຽງ.

ໃນໃບຢັ້ງຢືນ ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຍັງກຳນົດບັນດາເງື່ອນໄຂ, ຄຳແນະນຳດ້ານເຕັກນິກສະເພາະ ທີ່ຜູ້ພັດທະນາເຂື່ອນຕ້ອງເອົາໃຈໃສ່ ແລະ ປະຕິບັດຢ່າງເຂັ້ມງວດ.

ອົງການຄຸ້ມຄອງຄວາມປອດໄພເຂື່ອນ ສາມາດອອກໃບຢັ້ງຢືນການຈັດປະເພດເຂື່ອນໄດ້ ກໍ່ຕໍ່ເມື່ອ ຜູ້ພັດທະນາເຂື່ອນມີຄວາມພ້ອມໃນການປະຕິບັດຕາມຂໍ້ກຳນົດ ແລະ ພົ້ນທະດ້ານຄວາມປອດໄພຂອງເຂື່ອນ.

ບັນດາໂຄງການເຂື່ອນ ຈະບໍ່ສາມາດດຳເນີນກິດຈະການຂອງຕົນໄດ້ ຫາກບໍ່ໄດ້ຮັບການຢັ້ງຢືນ ການຈັດປະເພດຄວາມສ່ຽງຂອງເຂື່ອນ ທີ່ຖືກຕ້ອງ.

ມາດຕາ 18 ອາຍຸໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ

ອາຍຸຂອງໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ ມີດັ່ງນີ້:

- ຄວາມສ່ຽງຮ້າຍແຮງ ມີອາຍຸນຳໃຊ້ 5 ປີ.
- ຄວາມສ່ຽງສູງ ມີອາຍຸນຳໃຊ້ 8 ປີ.
- ຄວາມສ່ຽງປານກາງ ມີອາຍຸນຳໃຊ້ 10 ປີ.
- ຄວາມສ່ຽງຕ່ຳ ມີອາຍຸນຳໃຊ້ 10 ປີ ຫຼື ຕາມການຄົ້ນຄວ້າດ້ານເຕັກນິກ ຂອງອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ມາດຕາ 19 ການຕໍ່ອາຍຸໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ

ເມື່ອເຖິງອາຍຸກຳນົດຂອງໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ, ຜູ້ພັດທະນາເຂື່ອນຕ້ອງປະເມີນຄືນຄວາມສ່ຽງຂອງເຂື່ອນຂອງຕົນ ແລ້ວຍື່ນສະເໜີຫາອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນສາມາດຮຽກຮ້ອງຜູ້ພັດທະນາເຂື່ອນ ໃຫ້ດຳເນີນການປະເມີນຄວາມສ່ຽງຄືນ ດ້ວຍການດຳເນີນການກວດກາຄວາມປອດໄພເຂື່ອນແບບລະອຽດ ແລະ ຄົບຖ້ວນ ແລ້ວຕໍ່ອາຍຸໃບຢັ້ງຢືນຄືນໃໝ່ ຕາມກຳນົດເວລາ ຫຼື ຫຼັງຈາກເຫດການໄພພິບັດ ຫຼື ດ້ວຍເຫດຜົນທີ່ດີອື່ນໆ, ໂດຍສະເພາະໃນກໍລະນີມີການປ່ຽນແປງໃຫຍ່ ຂອງການນຳໃຊ້ທີ່ດິນ ຫຼື ມີການພັດທະນາ ໃນເຂດພື້ນທີ່ມີຄວາມສ່ຽງເກີດນ້ຳຖ້ວມຈາກເຫດເຂື່ອນແຕກພັງ.

ກ່ອນຈະໝົດອາຍຸ 12 ເດືອນ ຜູ້ພັດທະນາເຂື່ອນ ຕ້ອງດຳເນີນຂະບວນການ ກວດກາຄວາມປອດໄພຂອງເຂື່ອນ ແລະ ຍື່ນເຈດຈຳນົງຂໍຕໍ່ອາຍຸໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ ຫາ ອົງການຄຸ້ມຄອງຄວາມປອດໄພເຂື່ອນ ເພື່ອປະເມີນຄວາມສ່ຽງຂອງເຂື່ອນ ແລະ ອອກໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນໃຫ້ໃໝ່.

ຖ້າຫາກອາຍຸໃບຢັ້ງຢືນຄວາມສ່ຽງຂອງເຂື່ອນໝົດອາຍຸແລ້ວ ຜູ້ພັດທະນາເຂື່ອນບໍ່ມາຍື່ນເຈດຈຳນົງຕໍ່ອາຍຸໃບຢັ້ງຢືນການຈັດປະເພດຄວາມສ່ຽງຂອງເຂື່ອນ ອົງການຄຸ້ມຄອງຄວາມປອດໄພເຂື່ອນ ສາມາດສະ ເໜີພິຈາລະນາ ສັ່ງໂຈະກິດຈະການທັງໝົດຂອງໂຄງການ.

ໝວດທີ 3
ການຄຸ້ມຄອງການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ

ມາດຕາ 20 ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຂັ້ນສູນກາງ

ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຂັ້ນສູນກາງ (ກົມພະລັງງານ, ກະຊວງອຸດສາຫະກຳ ແລະ ການຄ້າ) ຄຸ້ມຄອງການຈັດປະເພດ ແລະ ການຈົດທະບຽນ ຄວາມສ່ຽງຂອງເຂື່ອນ ໃນທົ່ວປະເທດ ແລະ ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງກາງ, ສູງ ແລະ ຮ້າຍແຮງ.

ມາດຕາ 21 ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຂັ້ນແຂວງ/ນະຄອນຫຼວງ

ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຂັ້ນແຂວງ/ນະຄອນຫຼວງ (ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ/ນະຄອນຫຼວງ) ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງຕ່ຳ ຕາມການມອບໝາຍຂອງອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ ຂັ້ນສູນກາງ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ.

ໝວດທີ 4
ບົດບັນຍັດສຸດທ້າຍ

ມາດຕາ 22 ການຈັດຕັ້ງປະຕິບັດ

ມອບໃຫ້ອົງການຄຸ້ມຄອງຄວາມປອດໄພຂອງເຂື່ອນ (ກົມພະລັງງານ, ກະຊວງອຸດສາຫະກຳ ແລະ ການຄ້າ) ເປັນເຈົ້າການໃນການປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອສຶກສາ, ວິເຄາະ, ສ້າງ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງມີປະສິດທິຜົນ.

ຫ້ອງການ, ກົມ ແລະ ສະຖາບັນ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ/ນະຄອນຫຼວງ ແລະ ຜູ້ພັດທະນາເຂື່ອນ ຈຶ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 23 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປ. ຈັນສະແຫວງ ບຸນຢືນ